# ແຜນງານຄໍ້າປະກັນສະບຽງອາຫານ ຮອບດ້ານຂອງອາຊຽນ (AIFS)

## ແລະ ແຜນຍຸດທະສາດຈັດຕັ້ງປະຕິບັດ ແຜນງານຄໍ້າປະກັນ ສະບຽງອາຫານ ໃນພາກພື້ນອາຊຽນ (SPA-FS) 2015-2020



ASEAN Integrated Food Security (AIFS) Framework
and Strategic Plan of Action on Food Security
in the ASEAN Region (SPA-FS) 2015-2020

# ບົດນຳ

ການຖ້ຳປະກັນສະບຽງອາຫານອາຊຽນ ເປັນວຽກບູລິມະສິດຂອງອາຊຽນ ເນື່ອງຈາກ ປະຊາກອນຂອງອາຊຽນຈຳນວນບໍ່ໜ້ອຍ ທີ່ບໍລິໂພກອາຫານຍັງບໍ່ພຽງພໍ ໂດຍສະເພາະ ແມ່ນອາຫານທີ່ປອດໄພ ແລະ ມີຄຸນຄ່າທາງໂພສະນາການສູງ ເຖິງແມ່ນວ່າອາຊຽນ ເປັນກຸ່ມປະເທດສົ່ງອອກສິນຄ້າກະສິກຳຫຼັກ ແລະ ອາຫານຫຼາກຫຼາຍຊະນິດ. ສາເຫດຕົ້ນຕໍຂອງສະພາບ ດັ່ງກ່າວເຫັນວ່າ ມາຈາກຫຼາຍປັດໃຈ ເຊັ່ນ: ການຜະລິດອາຫານບໍ່ພຽງພໍໃນບາງປະເທດ, ບາງປະເທດກໍ່ມີຂີດຄວາມຈຳກັດຕ່ຳໃນການເຂົ້າເຖິງອາຫານ ແລະ ການຈໍລະຈອນແຈກຢາຍສະບຽງອາຫານ ຍັງບໍ່ທັນເປັນໄປຕາມຄວາມຕ້ອງການຂອງອາຊຽນ. ດັ່ງນັ້ນ ອາຊຽນ ຈຶ່ງໄດ້ສ້າງແຜນງານຄ້ຳປະກັນສະບຽງອາຫານຮອບດ້ານອາຊຽນຂຶ້ນ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານອາຊຽນໃນໄລຍະຍາວ.

ເພື່ອປະກອບສ່ວນຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ - ລັດ ກ່ຽວກັບ ການຄ້ຳປະກັນສະບຽງອາຫານ, ຈຶ່ງລຽບລຽງເອກະສານແຜນງານຄ້ຳປະກັນສະບຽງອາຫານຮອບດ້ານຂອງອາຊຽນ ແລະ ແຜນປະຕິບັດງານຄ້ຳປະກັນສະບຽງອາຫານ ປີ 2015 -2020 (AIFS – SPA-FS) ຈາກພາສາອັງກິດມາເປັນພາສາລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ ເພື່ອນຳໃຊ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຕົນ. ແຜນຍຸດທະສາດຈັດຕັ້ງປະຕິບັດການຄ້ຳປະກັນສະບຽງອາຫານໃນພາກພື້ນອາຊຽນ ປີ 2015 – 2020 ປະກອບມີ 9 ຍຸດທະສາດ ຄື 1). ສ້າງຄວາມເຂັ້ມແຂງໃຫ້ແກ່ການຄ້ຳປະກັນສະບຽງອາຫານ ລວມທັງມາດຕະການກະກຽມການບັນເທົາທຸກໃນໄລຍະສັ້ນ/ສຸກເສີນ, 2). ສົ່ງເສີມການຕະຫຼາດ ແລະ ການຄ້າອາຫານ, 3). ສ້າງຄວາມເຂັ້ມແຂງດ້ານການເຊື່ອມໂຍງຂໍ້ມູນຂ່າວສານດ້ານການຄ້ຳປະກັນສະບຽງອາຫານ ເພື່ອເຮັດໃຫ້ການພະຍາກອນ, ການວາງແຜນ ແລະ ການຕິດຕາມ ແລະ ການຊົມໃຊ້ຜະລິດຕະພັນທີ່ເປັນອາຫານພື້ນຖານ, 4). ສົ່ງເສີມການຜະລິດແບບຍືນຍົງ, 5). ຊຸກຍູ້ໃຫ້ມີການລົງທຶນໃສ່ພາກການຜະລິດອາຫານ ແລະ ອຸດສະຫະກຳປຸງແຕ່ງ ເພື່ອເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ, 6). ກຳນົດບັນຫາ ແລະ ວິທີແກ້ໄຂ ທີ່ພົວພັນເຖິງການຄ້ຳປະກັນສະບຽງອາຫານ, 7). ນຳໃຊ້ດ້ານໂພສະນາການ ເພື່ອສະໜອງເປັນຂໍ້ມູນໃຫ້ແກ່ການຄ້ຳປະກັນສະບຽງອາຫານ ແລະ ນະໂຍບາຍດ້ານກະສິກຳ, 8). ກຳນົດນະໂຍບາຍ, ການຈັດຕັ້ງ ແລະ ກົນໄກຄຸ້ມຄອງສຳລັບການພັດທະນາກະສິກຳຕິດພັນກັບໂພສະນາການໃນປະເທດອາຊຽນ, ແລະ 9). ພັດທະນາ ແລະ ສ້າງຄວາມເຂັ້ມແຂງດ້ານຜະລິດອາຫານໂພສະນາການ, ການສ້າງນະໂຍບາຍ/ແຜນງານຂອງຂະແໜງການກະສິກຳ ແລະ ປ່າໄມ້ ແລະ ການສ້າງຄວາມເຂັ້ມ

ແຂງໃຫ້ແກ່ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ. ແຕ່ລະຍຸດທະສາດ ດັ່ງກ່າວ ຍັງມີລາຍລະອຽດທີ່ສຳຄັນ ແລະ ເປັນເນື້ອໃນພື້ນຖານ ທີ່ສາມາດນຳມາຜັນຂະຫຍາຍເຂົ້າໃສ່ວຽກງານຕົວຈິງ.

ຄະນະຮັບຜິດຊອບລຽບລຽງຄູ່ມືສະບັບນີ້ ຫວັງຢ່າງຫຍິ່ງວ່າ ເນື້ອໃນຂອງເອກະສານສະບັບນີ້ ຈະເປັນພື້ນຖານໃຫ້ການຈັດຕັ້ງວຽກງານຄໍ້າປະກັນສະບຽງອາຫານ ຢູ່ ສປປ ລາວ ແລະ ຂໍຂອບໃຈມາຍັງທຸກພາກສ່ວນທີ່ໃຫ້ການສະໜັບສະໜູນໃນການແປ ແລະ ຈັດພິມເອກະສານສະບັບນີ້.

ຫົວໜ້າກົມປູກຝັງ

# ແຜນງານຄໍ້າປະກັນສະບຽງອາຫານຮອບດ້ານຂອງອາຊຽນ (AIFS) ແລະ ແຜນຍຸດທະສາດຈັດຕັ້ງປະຕິບັດ ແຜນງານຄໍ້າປະກັນສະບຽງອາຫານ ໃນພາກພື້ນອາຊຽນ (SPA-FS) 2015-2020

## ປະຫວັດຄວາມເປັນມາ

ພາຍຫຼັງວິກິດການດ້ານລາຄາອາຫານໃນຊ່ວງປີ 2007/2008, ກອງປະຊຸມສຸດຍອດຜູ້ນຳອາຊຽນໃນປີ 2009 ໄດ້ໃຫ້ປະຕິຍາບັນຮັບຮອງເອົາ ການຄໍ້າປະກັນສະບຽງອາຫານ ເປັນນະໂຍບາຍບຸລິມະສິດຖາວອນ ແລະ ສູງສຸດ. ການບັນລຸເປົ້າໝາຍດ້ານຄວາມໝັ້ນຄົງສະບຽງອາຫານ ໄດ້ປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນແມ່ນການທົດຖອຍທາງດ້ານເສດຖະກິດ ເນື່ອງຈາກວິກິດການທາງດ້ານການເງິນຂອງໂລກ, ຄ່າຄອງຊີບ ແລະ ປັດໄຈການຜະລິດກະສິກຳສູງຂຶ້ນ ເນື່ອງຈາກລາຄານໍ້າມັນເພີ່ມຂຶ້ນ. ເກີດມີສິ່ງຂົ່ມຂູ່ໃໝ່ຂຶ້ນມາ ເປັນຕົ້ນແມ່ນການຫັນປ່ຽນດິນປູກພືດສະບຽງ ເຂົ້າສູ່ການປູກພືດພະລັງງານທົດແທນ ເຮັດໃຫ້ມີຜົນກະທົບ ຕໍ່ການຜະລິດສະບຽງອາຫານ, ຜົນກະທົບໄລຍະສັ້ນຂອງໄພພິບັດທຳມະຊາດ ທີ່ເກີດມາຈາກການປ່ຽນແປງດິນຟ້າອາກາດ, ແລະ ຄວາມກົດດັນອື່ນໆ ໃນໄລຍະຍາວ ຕໍ່ກັບການຜະລິດສະບຽງອາຫານ ກໍ່ແມ່ນການຂະຫຍາຍໂຕຂອງຕົວເມືອງ, ການຫັນປ່ຽນດິນກະສິກຳ ແລະ ການຍົກຍ້າຍຂອງແຮງງານ ຈາກຊົນນະບົດໄປສູ່ຕົວເມືອງ.

ເພື່ອໃຫ້ຍຸດທະສາດສຳລັບຄໍ້າປະກັນສະບຽງອາຫານຢ່າງເປັນລະບົບ, ກອງປະຊຸມສຸດຍອດຜູ້ນຳອາຊຽນ ໄດ້ຮັບຮອງເອົາ ແຜນງານຮ່ວມມືຮອບດ້ານການຄໍ້າປະກັນສະບຽງອາຫານຂອງອາຊຽນ (AIFS) ແລະ ແຜນຍຸດທະສາດຈັດຕັ້ງປະຕິບັດ–ການຄໍ້າປະກັນສະບຽງອາຫານ (SPA – FS) ສຳລັບປີ 2009-2013. ແຜນງານ AIFS ໄດ້ກຳນົດເອົາໂຕວັດແທກ ໂດຍອີງໃສ່ ຄຳປະຕິຍານອັ່ນແຮງກ້າ ແລະ ຄວາມເປັນເຈົ້າການ ຂອງບັນດາປະເທດສະມາຊິກ. ເປົ້າໝາຍຂອງແຜນງານ AIFS ປະກອບມີ 2 ເປົ້າໝາຍ: i) ຮັບປະກັນຄວາມໝັ້ນຄົງສະບຽງອາຫານໄລຍະຍາວ ໃນອາຊຽນ; ii) ປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ ໃນອາຊຽນໃຫ້ດີຂຶ້ນ.

ເພື່ອເຮັດໃຫ້ໄດ້ຮັບຜົນສຳເລັດຕາມເປົ້າໝາຍທີ່ວາງໄວ້, ແຜນງານ AIFS ໄດ້ກຳນົດເອົາ 6 ຍຸດທະສາດ, ຊຶ່ງນອນຢູ່ໃນ 4 ກອບວຽກຫຼັກເຊັ່ນ: ການບັນເທົາຜົນກະທົບໃນພາວະສຸກເສີນ/ໄລຍະສັ້ນ; ການຄ້າສະບຽງອາຫານແບບຍືນຍົງ; ການເຊື່ອມໂຍງລະບົບຂໍ້ມູນຂ່າວສານ; ແລະ ວິວັດຕະນາ

ກຳໃໝ່ຂອງການຜະລິດກະສິກຳ. ເພື່ອເຮັດໃຫ້ແຜງານ AIFS ມີການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ຍຸດທະສາດຈັດຕັ້ງປະຕິບັດແຜນງານຄໍ້າປະກັນສະບຽງອາຫານ ຫຼື SPA-FS ຊ່ວງປີ 2009-2013. ພາຍໃຕ້ SPA-FS, ໄດ້ນຳເອົາຍຸດທະສາດຂອງແຜນງານ AIFS ມາຜັນຂະຫຍາຍໃຫ້ເປັນແຜນ ແລະ ກິດຈະກຳ. SPA–FS ປະກອບມີຂະບວນການທົບທວນຂອງມັນເອງ, ຊຶ່ງໄດ້ກຳນົດການປະເມີນຜົນສຸດທ້າຍ ແມ່ນສິ້ນສຸດການຈັດຕັ້ງປະຕິບັດແຜນ 5 ປີ ໃນປີ 2013. ການປະເມີນຜົນກາງສະໄໝ ຂອງ SPA-FS ໄດ້ເຮັດໃນປີ 2012.

ໃນພາກພື້ນ ໄດ້ມີບັນຫາກ່ຽວກັບຄວາມອຶດຫິວເປັນເວລາຍາວນານ ໂດຍສະເພາະແມ່ນບັນດາປະເທດສະມາຊິກອາຊຽນ ທີ່ຍັງຢູ່ໃນລະດັບດ້ອຍພັດທະນາ. ອັດຕາສ່ວນປະຊາກອນທີ່ຂາດສານອາຫານ ພົບຫຼາຍຢູ່ໃນ ສປປລາວ, ຟີລິບປິ່ນ ແລະ ກຳປູເຈຍ. ອິນໂດເນເຊຍ, ເປັນປະເທດທີ່ມີຄົນຊັ້ນກາງຫຼາຍ, ຍັງມີບັນຫາຮ້າຍແຮງກ່ຽວກັບເດັກນ້ອຍອາຍຸຕໍ່າກວ່າ 5 ປີ. ຕາມຂໍ້ມູນທີ່ມີ, ບາງປະເທດສະມາຊິກອາຊຽນ ມີທ່າອ່ຽງທີ່ຮ້າຍແຮງຂຶ້ນໂດຍສະເພາະ ແມ່ນບັນຫາການຂາດທາດອາຫານໃນເດັກນ້ອຍອາຍຸຕໍ່າກວ່າ 5 ປີ ໃນປະເທດກຳປູເຈຍ, ແລະ ຍັງພົບເຫັນການຂາດພະລັງງານ ໃນປະເທດຟີລິບປິ່ນ. ການຂາດຈຸລະທາດ ໂດຍສະເພາະ ພາວະເລືອດຈາງ ຍັງເປັນບັນຫາດ້ານສາທາລະນະສຸກ ຢູ່ຫຼາຍປະເທດໃນອາຊຽນ[1] .

ແຜນຈັດຕັ້ງປະຕິບັດໃກ້ຈະສິ້ນສຸດລົງໃນ ປີ 2013, ກອງປະຊຸມ ເຈົ້າໜ້າທີ່ອາວຸໂສ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອາຊຽນ ຄັ້ງທີ່ 34 ໄດ້ຕົກລົງເຫັນດີໃຫ້ສືບຕໍ່ແຜນງານດັ່ງກ່າວຫຼັງປີ 2013 ແລະ ຂະຫຍາຍຈົນເຖິງປີ 2014. ເພື່ອແກ້ໄຂບັນຫາຄວາມໝັ້ນຄົງດ້ານສະບຽງອາຫານໃນໄລຍະຍາວ ຢູ່ພາກພື້ນອາຊຽນໄລຍະຍາວ, ແຜນງານ AIFS ໄດ້ພັດທະນາຂຶ້ນມາເພື່ອເປັນກອບ ແລະ ຍຸດທະສາດຮ່ວມ ສໍາລັບການຮ່ວມມື ຂອງບັນດາປະເທດສະມາຊິກອາຊຽນ. ແຜນງານ AIFS ປະກອບມີ ເປົ້າໝາຍ, ຈຸດປະສົງ, ອະທິບາຍຄຳ ແລະ ກອບໜ້າວຽກ, ຊຶ່ງທັງໝົດນັ້ນ ມີແຜນຍຸດທະສາດ ຄໍ້າປະກັນສະບຽງອາຫານ ໃນພາກພື້ນອາຊຽນ ສະໜັບສະໜູນການຈັດຕັ້ງປະຕິບັດ, ເລີ່ມຈັດຕັ້ງປະຕິບັດ 2015-2020.

ແຜນງານ AIFS ແລະ ຍຸດທະສາດ SPA-FS 2015-2020 ມີຄວາມຈຳເປັນຕ້ອງພັດທະນາຂຶ້ນມາ ພາຍໃຕ້ເນື້ອໃນ ແລະ ຄຳປະຕິຍານໃໝ່ ຂອງຜູ້ນຳອາຊຽນ ໂດຍເນັ້ນໃສ່ບັນຫາດັ່ງຕໍ່ໄປນີ້:

- ມີໂຄງລ່າງພື້ນຖານທີ່ແຂງແກ່ນ, ເທົ່າທຽມກັນ ແລະ ຍືນຍົງ ເພື່ອປັບປຸງຄວາມໝັ້ນຄົງສະບຽງອາຫານ ແລະ ໂພຊະນາການ;
- ມີແຜນໂຕ້ຕອບພາວະສຸກເສີນທີ່ຊັດເຈນ ແລະ ທັນເວລາ;

[1] WHO Micronutrient Database of Vitamin and Mineral Nutrition Information System (VMNIS), www.who.int/vmnis/database/en

- ສ້າງແຜນຮ່ວມມືຮອບດ້ານໃນຂະແໜງການໃໝ່ ດ້ານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ພ້ອມທັງເພີ່ມການລົງທຶນໃສ່ຂະແໜງກະສິກໍາ;
- ມີການປະສານງານ ແລະ ຕິດຕາມ ແຜນງານ AIFS ແລະ ຍຸດທະສາດ SPA-FS ຢ່າງປົກກະຕິ.

## ການປະເມີນຜົນ ຍຸດທະສາດ SPA-FS (2009-2013)

ໂຕຊີ້ວັດການມີສະບຽງອາຫານໃນ ອາຊຽນ ໄດ້ມີການປັບປຸງຢ່າງຕໍ່ເນື່ອງ, ເຖິງວ່າຈະຢູ່ໃນຊ່ວງຫຼັງວິກິດການກໍ່ຕາມ. ຜະລິດຕະພາບຂອງກະສິກໍາເຕີບໂຕຂຶ້ນ, ໄວທີ່ສຸດແມ່ນພົບຢູ່ປະເທດກໍາປູເຈຍ ແລະ ຫວຽດນາມ. ແຕ່ວ່າ ບາງປະເທດເຫັນວ່າ ການຜະລິດກະສິກໍາຫຼຸດລົງ. ຫຼັງວິກິດການທາງດ້ານເສດຖະກິດ, ລາຍຮັບເພີ່ມຂຶ້ນ ແລະ ຄວາມທຸກຍາກຫຼຸດລົງ. ຄວາມແຕກຕ່າງດ້ານລາຍຮັບລະຫວ່າງປະເທດສະມາຊິກອາຊຽນ ຍັງມີໃຫ້ເຫັນຢ່າງຊັດເຈນ; ແຕ່ວ່າ ການເຕີບໂຕດ້ານລາຍຮັບແມ່ນຊ້າລົງ ຫຼັງປີ 2008, ເນື່ອງຈາກວິກິດການດ້ານການເງິນໂລກ. ນອກນັ້ນ ໃນປີ 2008 ລາຄາອາຫານທົ່ວໂລກເພີ້ມຂຶ້ນ ເຮັດໃຫ້ມີຜົນກະທົບຕໍ່ອາຊຽນ.

ເລີ່ມຕົ້ນປີ 2009 ການເຕີບໂຕເສດຖະກິດໃນພາກພື້ນໄດ້ຟື້ນໂຕຂຶ້ນ, ເຮັດໃຫ້ສະພາບເງື່ອນໄຂສໍາລັບປັບປຸງຄວາມໝັ້ນຄົງສະບຽງອາຫານ ຢູ່ໃນສະພາບທີ່ດີ. ແຕ່ວ່າການເຕີບໂຕລາຍຮັບຢ່າງດຽວ ບໍ່ພຽງພໍ ທີ່ຈະສາມາດມາຊີ້ວັດ ການຄໍ້າປະກັນສະບຽງອາຫານໄດ້. ສະພາບເງື່ອນໄຂທີ່ຈໍາເປັນອື່ນໆ ລວມທັງແຜນສະໜັບສະໜູນພາກລັດ ຮ່ວມກັບ ພາກເອກະຊົນ ແລະ ພາກສ່ວນອື່ນໆ. ໃນລະດັບພາກພື້ນ, ແຜນສະໜັບສະໜູນດັ່ງກ່າວ ສາມາດຈັດຕັ້ງປະຕິບັດໄດ້ ຢູ່ໃນແຜນສືບຕໍ່ SPA–FS ໃນຊ່ວງທີ່ສອງ.

ກອງປະຊຸມຄັ້ງທີ່ 34 ຂອງເຈົ້າໜ້າທີ່ອາວຸໂສ – ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ອາຊຽນ (SOM – AMAF) ໄດ້ສັງລວມບັນດາໝາກຜົນທີ່ໄດ້ຮັບ ຂອງ SPA-FS, ດັ່ງລຸ່ມນີ້:

1. ຂໍ້ຕົກລົງຄັງແຮເຂົ້າອາຊຽນ +3 (APTERR) ມີຜົນບັງຄັບໃຊ້ ແລະ ສ້າງຫ້ອງການກອງເລຂາ APTERR ເປັນກອງເລຂາປະຈໍາ ຂອງ APTERR ຕັ້ງແຕ່ເດືອນ ມີນາ 2013;
2. ໄດ້ມີການລິເລີ່ມໃຫ້ການສະໜັບສະໜູນ ສ້າງຄວາມເຂັ້ມແຂງ ໃຫ້ແກ່ ຄະນະກໍາມະການຄັງແຮສະບຽງອາຫານອາຊຽນ (AFSRB);
3. ສ້າງລະບົບຂໍ້ມູນຂ່າວສານຄໍ້າປະກັນສະບຽງອາຫານອາຊຽນ (AFSIS);
4. ຮັດແໜ້ນສາຍພົວພັນ ກັບ ອົງການຈັດຕັ້ງສາກົນ ແລະ ເພື່ອນຮ່ວມພັດທະນາ ເຊັ່ນ

FAO, ADB ເພື່ອສະໜັບສະໜູນ ຂໍ້ມູນຂ່າວສານການຄ້ຳປະກັນສະບຽງອາຫານ ແລະ ການລິເລີ່ມສ້າງຄວາມເຂັ້ມແຂງ;

5. ເລີ່ມເປີດໂຕ ຕະຫຼາດອາຊຽນ-ສະຫະລັດອາເມລິກາ (ASEAN–US MARKET) ສ້າງລາຍຮັບຈາກ ກະສິກຳໃຫ້ສູງສຸດ ໂດຍຜ່ານໂຄງການຮ່ວມມື ການເພີ່ມຄວາມຮູ້ດ້ານທຸລະກິດ ແລະ ການຄ້າ.

# ບົດຮຽນ ແລະ ປະສົບການ

ບົດປະເມີນຜົນ ແຜນງານ AIFS ແລະ ຍຸດທະສາດ SPA–FS 2009-2013 ສະແດງໃຫ້ເຫັນວ່າ ຄໍານິຍາມ ແລະ ຂອບເຂດ, ລວມທັງ ອົງປະກອບ ແລະ ຍຸດທະສາດ ຍັງສອດຄ່ອງກັບແຜນຍຸດທະສາດ ຄໍ້າປະກັນສະບຽງອາຫານ. ແຕ່ອີງໃສ່ປະສົບການ ແລະ ບົດຮຽນໃນການຈັດຕັ້ງຊ່ວງທໍາອິດ ພ້ອມທັງບັນຫາ ແລະ ສິ່ງທ້າທາຍ ຂອງພາກພື້ນ, ແຜນງານ AIFS ແລະ ຍຸດທະສາດ SPA–FS ມີຄວາມຈໍາເປັນຕ້ອງໄດ້ທົບທວນ ແລະ ດັດແກ້, ບົດຮຽນສໍາຄັນໄດ້ສັງລວມໄວ້ດັ່ງລຸ່ມນີ້:

ແຜນງານ AIFS ແລະ ຍຸດທະສາດ SPA–FS ຕ້ອງເບິ່ງລະອຽດໃນການກໍານົດຜົນໄດ້ຮັບ, ໝາກຜົນ ແລະ ຜົນກະທົບ. ໂຕຊີ້ວັດ ຕ້ອງລະອຽດ, ສາມາດວັດແທກໄດ້ ຈາກຂໍ້ມູນພື້ນຖານ, ປັງປຸງໃຫ້ທັນສະໄໝໂຕຊີ້ວັດ ເປັນພາກສ່ວນໜຶ່ງ ຂອງລະບົບຕິດຕາມປະເມີນຜົນ ແຜນງານ AIFS ແລະ ຍຸດທະສາດ SPA–FS ຈົນເຖິງປີ 2020, ຕ້ອງໄດ້ອອກແບບ ແລະ ສ້າງແຜນຕິດຕາມລະອຽດ.

ການກະກຽມແຜນຈັດຕັ້ງປະຕິບັດຂອງຈຸດປະສານງານ ເພື່ອເຮັດໃຫ້ວຽກງານສາມາດກວດສອບໄດ້ ຕ້ອງໄດ້ປະຕິບັດຕາມ ລະບົບຕິດຕາມ ແລະ ປະເມີນຜົນ, ພ້ອມທັງລະບຸຜົນໄດ້ຮັບ ແລະ ກິດຈະກໍາຕ່າງໆ.

ກິດຈະກໍາ ແລະ ຜົນໄດ້ຮັບ ຕ້ອງໄດ້ຄັດເລືອກ. ຍ້ອນການຕິດຕາມ ແລະ ປະເມີນຜົນມີຄວາມຫຍຸ້ງຍາກ, ດັ່ງນັ້ນ ກິດຈະກໍາ ແລະ ຜົນໄດ້ຮັບ ຕ້ອງໄດ້ກໍານົດບຸລິມະສິດ ເພື່ອບັນຈຸລົງເຂົ້າໃນຍຸດທະສາດ SPA-FS.

ກິດຈະກໍາ ແລະ ຜົນໄດ້ຮັບ ຕ້ອງເນັ້ນໃສ່ກອບຮ່ວມມືຂອງພາກພື້ນ, ແທນການນໍາໃຊ້ໂຕຊີ້ວັດ ທີ່ເນັ້ນໃສ່ລະດັບປະເທດ. ຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດໃນຊ່ວງທໍາອິດ ແມ່ນການລິເລີ່ມໃນລະດັບພາກພື້ນ.

ອົງປະກອບໜ້າວຽກສະເພາະຂອງ SPA-FS ຕ້ອງສິ້ນສຸດໃນລະດັບກິດຈະກໍາ; ກິດຈະກໍາຍ່ອຍບໍ່ຈໍາເປັນຕ້ອງມີການຜັນຂະຫຍາຍຕໍ່ໄປອີກ, ແຕ່ສາມາດເປັນການຜັນຂະຫຍາຍຈາກກິດຈະກໍາເບື້ອງຕົ້ນ. ການຈັດຕັ້ງປະຕິບັດກິດຈະກໍາເຫຼົ່ານັ້ນ ແມ່ນຄວາມຮັບຜິດຊອບ ຂອງອົງກອນທີ່ໄດ້ຖືກມອບໝາຍໃຫ້.

ໃນແຜນງານ AIFS ແລະ ຍຸດທະສາດ SPA-FS 2015-2020 ຕ້ອງເນັ້ນໃສ່ຄວາມຈຳເປັນ ໃນການແກ້ໄຂບັນຫາໂພຊະນາການ, ຄວາມປອດໄພອາຫານ ແລະ ການລຶບລ້າງຄວາມທຸກຍາກ ໃຫ້ສອດຄ່ອງກັບ ແຜນຍຸດທະສາດອາຊຽນ ແລະ ແຜນບຸລິມະສິດ AEC.

ຍຸດທະສາດ SPA-FS 2015-2020 ຕ້ອງລະບຸກົນໄກຮ່ວມມືໃນປະເທດສະມາຊິກອາຊຽນ ແລະ ຂະແໜງການອື່ນໆຂອງອາຊຽນ. ຊຶ່ງເລີ່ມຕົ້ນດ້ວຍການຮ່ວມມືພາຍໃນ ຂະແໜງການທີ່ລາຍງານກ່ຽວກັບການຄໍ້າປະກັນສະບຽງອາຫານ ໃຫ້ແກ່ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ອາຊຽນ (AMAF) (ເຊັ່ນ APTERR, AFSRB, AFSIS), ໄປຄຽງຄູ່ກັບການລິເລີ່ມພາຍໃນພາລະບົດບາດຂອງ AMAF ຫຼື AMAF+3 (ເຊັ່ນ: AFCC, APTCS-FSBD). ເຊິ່ງຕ້ອງຮ່ວມມືກັບຂະແໜງການອື່ນ (ເຊັ່ນ: AEM), ພ້ອມທັງເປົ້າໝາຍອື່ນໆ ພາຍໃນປະຊາຄົມອາຊຽນ.

## ແຜນງານຄໍ້າປະກັນສະບຽງອາຫານຮອບດ້ານອາຊຽນ

ເພື່ອແກ້ໄຂບັນຫາ ຄວາມໝັ້ນຄົງສະບຽງອາຫານ ແລະ ໂພຊະນາການ ໃນໄລຍະຍາວ ຢູ່ໃນພາກພື້ນອາຊຽນ, ແຜນງານ AIFS ແລະ ຍຸດທະສາດ SPA-FS 2015-2020 ຈະຕ້ອງສືບຕໍ່ກຳນົດກອບ ແລະ ຍຸດທະສາດການຮ່ວມມື ລະຫວ່າງປະເທດສະມາຊິກອາຊຽນ.

ແຜນງານ AIFS ປະກອບມີເປົ້າໝາຍ, ຈຸດປະສົງ, ຄຳນິຍາມ, ເອກະສານແນະນຳ ແລະ ຫຼັກການ, ພ້ອມທັງອົງປະກອບໜ້າວຽກ, ທີ່ຖືກສະໜັບສະໜູນໂດຍ ຍຸດທະສາດ SPA-FS.

## ເປົ້າໝາຍ

ເປົ້າໝາຍຂອງ ແຜນງານ AIFS ແລະ ຍຸດທະສາດ SPA-FS 2015-2020 ແມ່ນເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ ໄລຍະຍາວ, ເພື່ອປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນໃນ ອາຊຽນໃຫ້ດີຂຶ້ນ. ຍຸດທະສາດ SPA-FS ຕ້ອງສ້າງເງື່ອນໄຂເອື້ອຍອຳນວຍ, ທີ່ຈະສາມາດເຮັດໃຫ້ປະເທດສະມາຊິກ ສາມາດເຂົ້າຮ່ວມ, ຈັດຕັ້ງປະຕິບັດ ແລະ ໃຫ້ການຮ່ວມມື ໃນປະເດັນຕ່າງໆທີ່ກ່ຽວຂ້ອງກັບ ການຜະລິດອາຫານ, ການປຸງແຕ່ງ ແລະ ການຄ້າ.

ແຜນງານ AIFS ແລະ ຍຸດທະສາດ SPA-FS ຍັງກາຍເປັນເວທີແລກປ່ຽນຂໍ້ມູນຂ່າວສານ, ການຖ່າຍທອດເຕັກໂນໂລຊີໃໝ່, ການແລກປ່ຽນຄວາມຮູ້ກັບພາກສ່ວນຕ່າງໆ, ລວມທັງພາກລັດ, ຜູ້ຄ້າຂາຍ, ນັກວິທະຍາສາດ, ສະຖາບັນຄົ້ນຄວ້າ ແລະ ຊາວກະສິກອນ. ໂດຍສະເພາະ ແມ່ນສ້າງເຄືອ

ຂ່າຍທີ່ເຂັ້ມແຂງ ໃຫ້ແກ່ ຜູ້ນໍາອາຊຽນໃນການພະຍາກອນ, ວາງແຜນ ແລະ ຕິດຕາມ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ.

## ຈຸດປະສົງ

ເພື່ອເຮັດໃຫ້ໄດ້ຮັບຕາມຈຸດປະສົງທີ່ຕັ້ງໄວ້, ແຜນງານ AIFS ແລະ ຍຸດທະສາດ SPA-FS ໄດ້ຕັ້ງຈຸດປະສົງໄວ້ດັ່ງລຸ່ມນີ້:

ກ) ເພື່ອເພີ່ມ ແລະ ເຮັດໃຫ້ການຜະລິດມີຄວາມຍືນຍົງ;
ຂ) ເພື່ອຫຼຸດຜ່ອນຜົນເສຍຫາຍຫຼັງເກັບກ່ຽວ;
ຄ) ເພື່ອສົ່ງເສີມການຕະຫຼາດ ແລະ ການຄ້າຜົນຜະລິດ ແລະ ປັດໄຈການຜະລິດກະສິກໍາ;
ງ) ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ;
ຈ) ເພື່ອຮັບປະກັນຄວາມປອດໄພ, ຄຸນນະພາບ ແລະ ໂພຊະນາການ ຂອງອາຫານ;
ສ) ເພື່ອສົ່ງເສີມໃຫ້ມີ ແລະ ສາມາດເຂົ້າເຖິງປັດໄຈການຜະລິດ; ແລະ
ຊ) ເພື່ອກະກຽມແຜນບັນເທົາທຸກສຸກເສີນສະບຽງອາຫານຂອງອາຊຽນ.

## ນິຍາມຄໍາສັບ

**ການຄໍ້າປະກັນສະບຽງອາຫານ** ໝາຍເຖິງທຸກຄົນ, ຕະຫຼອດເວລາ, ສາມາດເຂົ້າເຖິງສະບຽງອາຫານຢ່າງພຽງພໍ, ປອດໄພ ແລະ ມີໂພຊະນາການ ໂດຍທາງກາຍະພາບ ແລະ ທາງເສດຖະກິດ ເພື່ອຕອບສະໜອງຄວາມຕ້ອງການບໍລິໂພກ ແລະ ອາຫານທີ່ຊົມຊອບ ເພື່ອສຸຂະພາບທີ່ແຂງແຮງ ແລະ ສົມບູນ (ກອງປະຊຸມສຸດຍອດອົງການອາຫານໂລກ, 1996). ນິຍາມຄໍາສັບ ສໍາລັບຄວາມໝັ້ນຄົງດ້ານສະບຽງອາຫານ ໄດ້ມີຫຼາຍທັດສະນະຕ່າງໆດັ່ງລຸ່ມນີ້:

**ການມີສະບຽງອາຫານ:** ມີປະລິມານພຽງພໍ ແລະ ຄຸນນະພາບເໝາະສົມ, ສະໜອງການຜະລິດຢູ່ພາຍໃນ ແລະ ນໍາເຂົ້າ (ລວມທັງອາຫານຊ່ວຍເຫຼືອ).

**ການເຂົ້າເຖິງສະບຽງອາຫານ**: ທຸກຄົນສາມາດເຂົ້າເຖິງແຫຼ່ງຊັບພະຍາກອນຢ່າງພຽງພໍ (ສິດທິຕ່າງໆ) ເພື່ອໃຫ້ໄດ້ມາເຊິ່ງສະບຽງອາຫານຢ່າງເໝາະສົມ ສໍາລັບການບໍລິໂພກ ທີ່ມີໂພຊະນາການ. ສິດທິຕ່າງໆ ແມ່ນກໍານົດ ໃນຮູບແບບໝວດຜະລິດຕະພັນສິນຄ້າຕ່າງໆ ທີ່ບຸກຄົນສາມາດຮຽກຮ້ອງ ທາງດ້ານກົດໝາຍ, ການເມືອງ, ເສດຖະກິດ ແລະ ສັງຄົມ ຂອງຊຸມຊົນທີ່ພວກເຂົາອາໄສຢູ່ (ລວມທັງສິດທິແບບດັ້ງເດີມເຊັ່ນ: ການເຂົ້າເຖິງຊັບພະຍາກອນ).

**ການນຳໃຊ້ປະໂຫຍດ**: ການນຳໃຊ້ປະໂຫຍດຂອງອາຫານ ໂດຍຜ່ານການພໍລິໂພກຢ່າງພຽງພໍ, ນ້ຳສະອາດ, ສຸຂານາໄມ ແລະ ການຮັກສາສຸຂະພາບ ບັນລຸຕາມເປົ້າໝາຍໂພຊະນາການ ເພື່ອສະໜອງຄວາມຕ້ອງການ ຂອງທຸກພາກສ່ວນສາລີລະ. ເຊິ່ງເຮັດໃຫ້ມີຄວາມຈຳເປັນ ຕ້ອງບັນຈຸເອົາໝວດຜະລິດຕະພັນທີ່ບໍ່ແມ່ນອາຫານ ເຂົ້າໃນແຜນຄ້ຳປະກັນສະພຽງອາຫານ.

**ຄວາມໝັ້ນຄົງ**: ເພື່ອເຮັດໃຫ້ມີຄວາມໝັ້ນຄົງທາງດ້ານສະບຽງອາຫານ, ປະຊາກອນ, ຄົວເຮືອນ ຫຼື ບຸກຄົນ ຕ້ອງສາມາດ ເຂົ້າເຖິງສະບຽງອາຫານ ໄດ້ຕະຫຼອດເວລາ. ພວກເຂົາຕ້ອງບໍ່ມີຄວາມສ່ຽງ ໃນການສູນເສຍ ການເຂົ້າເຖິງ ສະບຽງອາຫານ ໃນເວລາເກີດເຫດສຸກເສີນຕ່າງໆ (ວິກິດການທາງດ້ານເສດຖະກິດ ຫຼື ສະພາບດິນຟ້າອາກາດ) ຫຼື ເຫດການທີ່ເກີດ ຂຶ້ນເປັນ ຮອບວຽນ (ເຊັ່ນ ລະດູການຂາດແຄນອາຫານ). ແນວຄວາມຄິດ ຂອງຄວາມໝັ້ນຄົງ ໝາຍເຖິງສອງຢ່າງຄື ການມີສະບຽງ ອາຫານ ແລະ ການເຂົ້າເຖິງສະບຽງອາຫານໄດ້ໃນຫຼາຍຮູບແບບ.

**ຄວາມໝັ້ນຄົງດ້ານໂພຊະນາການ** ເກີດຂຶ້ນໃນເມື່ອທຸກຄົນມີອາຫານບໍລິໂພກ ຢ່າງພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ ໄດ້ຕະຫຼອດເວລາ, ມີຫຼາຍປະເພດ, ມີຄວາມຫຼາກຫຼາຍ, ມີທາດໂພຊະນາການ ແລະ ມີຄວາມປອດໄພ ເພື່ອສະໜອງ ຄວາມ ຕ້ອງການໃນການບໍລິໂພກ ແລະ ເປັນອາຫານທີ່ນິຍົມ ເພື່ອເຮັດໃຫ້ສຸຂະພາບ ແລະ ພາລານາໄມທີ່ສົມບູນ, ປະກອບດ້ວຍ ສະພາບແວດລ້ອມທີ່ສະອາດ, ມີສຸຂະພາບດີ, ມີການສຶກສາອົບຮົມ ແລະ ການດູຮັກສາ.

**ການຜະລິດກະສິກຳເຊິ່ງໂພຊະນາການ**: ເມື່ອການຜະລິດກະສິກຳ ຫາກເລັ່ງໃສ່ເປົ້າໝາຍໂພຊະນການ, ມີຄວາມຫ່ວງໃຍ ແລະ ມີການພິຈາລະນາ ເພື່ອປັບປຸງທາດໂພຊະນາການ ໂດຍເຮັດໃຫ້ມີອາຫານເພີ່ມຂຶ້ນ, ສາມາດເຂົ້າເຖິງ ແລະ ບໍລິໂພກອາຫານ ທີ່ມີໂພຊະນາການ ໂດຍມີການບໍລິໂພກຫຼາຍປະເພດ ແລະ ຄວາມຫຼາກຫຼາຍ ຂອງທາດໂພຊະນາການ ແລະ ອາຫານປອດໄພ[2].

[2] ການນຳໃຊ້ການຜະລິດກະສິກຳເຊິ່ງໂພຊະນາການ ແມ່ນວິທີທີ່ຍືນຍົງທີ່ສຸດ ໃນການຫຼຸດຜ່ອນການຂາດໂພຊະນການ, ວິທີນີ້ແມ່ນເລີ່ມຕົ້ນເບິ່ງຕັ້ງແຕ່ ຂະບວນການຄັດເລືອກແນວພັນ ທີ່ມີຄຸນຄ່າທາງໂພຊະນາການສູງ, ການຜະລິດແບບຫຼາກຫຼາຍ, ການສຶກສາອົບຮົມດ້ານໂພຊະນາການ ໂດຍຜ່ານຕາໜ່າງ ສົ່ງເສີມກະສິກຳ ແລະ ຮູບບແບໂຮງຮຽນຊາວນາ, ປັບປຸງວິທະຍາການຫຼັງການເກັບກ່ຽວ ເພື່ອຮັກສາຄຸນນະພາບຂອງອາຫານ, ການປຸງແຕ່ງ/ເກັບຮັກສາອາຫານ ເພື່ອຮັກສາໄວ້ກິນໃນຊ່ວງລະດູທີ່ບໍ່ມີການຜະລິດ ແລະ ອື່ນໆ.

## ພາກສະເໜີ

ໃນປີ 2015-2020, ຜະລິດຕະພັນບຸລິມະສິດ ເພື່ອການຄໍ້າປະກັນສະບຽງອາຫານ ໃນ ອາຊຽນ ລວມມີ ເຂົ້າ, ສາລີ, ຖົ່ວເຫຼືອງ, ນໍ້າຕານ ແລະ ມັນຕົ້ນ. ນອກນັ້ນ ຍັງມີຜະລິດຕະພັນອື່ນໆ ເຊັ່ນ: ລ້ຽງສັດ, ການປະມົງ ແລະ ພືດຕ່າງໆ ທີ່ເປັນອາຫານຫຼັກ, ມີຄວາມສໍາຄັນຕໍ່ຄວາມໝັ້ນຄົງດ້ານ ສະບຽງອາຫານ ແລະ ໂພຊະນາການ, ຈະຕ້ອງໄດ້ກໍານົດຂຶ້ນຕື່ມ ໃນເວລາຈັດຕັ້ງປະຕິບັດ ແຜນງານ AIFS ແລະ ຍຸດທະສາດ SPA-FS.

## ອົງປະກອບໜ້າວຽກຫຼັກ

ແຜນງານ AIFS ປະກອບມີ 5 ອົງປະກອບໜ້າວຽກຫຼັກ, ທີ່ມີຄວາມແຕກຕ່າງກັນ ແຕ່ມີ ຄວາມເກາະຕ່ອງກັນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຮ່ວມມື ໃນການແກ້ໄຂບັນຫາຄວາມ ໝັ້ນຄົງດ້ານສະບຽງອາຫານໃນ ອາຊຽນ. ອົງປະກອບໜ້າວຽກຕ່າງໆ ໃນແຜນງານ AIFS ແມ່ນສະ ໜັບສະໜູນໂດຍ ແຜນຍຸດທະສາດດັ່ງລຸ່ມນີ້:

**ອົງປະກອບໜ້າວຽກ 1**: ການຄໍ້າປະກັນສະບຽງອາຫານ ແລະ ການບັນເທົາທຸກໄລຍະສັ້ນ/ຮີບດ່ວນ
ຍຸດທະສາດ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ ການຄໍ້າປະກັນສະບຽງອາຫານ ລວມທັງມາດຕະການ ກະກຽມການບັນເທົາທຸກ ໃນໄລຍະສັ້ນ/ສຸກເສີນ

**ອົງປະກອບໜ້າວຽກ 2**: ການພັດທະນາການຄ້າອາຫານແບບຍືນຍົງ
ຍຸດທະສາດ 2: ຊຸກຍູ້ສົ່ງເສີມການຄ້າ ແລະ ການຕະຫຼາດອາຫານ

**ອົງປະກອບໜ້າວຽກ 3**: ການເຊື່ອມໂຍງລະບົບຂໍ້ມູນຂ່າວສານ ດ້ານການຄໍ້າປະກັນສະບຽງອາຫານ
ຍຸດທະສາດ 3: ສ້າງຄວາມເຂັ້ມແຂງໃຫ້ແກ່ ການເຊື່ອມໂຍງລະບົບຂໍ້ມູນຂ່າວສານ ດ້ານການຄໍ້າປະກັນສະບຽງອາຫານ ເພື່ອເຮັດໃຫ້ສາມາດ ຄາດຄະເນ, ວາງແຜນ ແລະ ຕິດຕາມ ພ້ອມທັງການ ຊົມໃຊ້ຜະລິດຕະພັນອາຫານ ຢ່າງມີປະສິດທິພາບ.

**ອົງປະກອບໜ້າວຽກ 4: ວິວັດຕະກໍາດ້ານການຜະລິດກະສິກໍາ**
ຍຸດທະສາດ 4: ຊຸກຍູ້ສົ່ງເສີມການຜະລິດແບບຍືນຍົງ

ຍຸດທະສາດ 5. ຊຸກຍູ້ໃຫ້ມີການລົງທຶນໃສ່ພາກການຜະລິດອາຫານ ແລະ ກະສິກຳຫຼາຍຂຶ້ນ ເພື່ອສະໜັບສະໜູນວຽກງານ ການຄ້ຳປະກັນສະບຽງອາຫານ
ຍຸດທະສາດ 6. ກຳນົດບັນຫາ ແລະ ວິທີແກ້ສຸກເສີນທີ່ກ່ຽວຂ້ອງກັບການຄ້ຳປະກັນສະບຽງອາຫານ

**ອົງປະກອບໜ້າວຽກ 5: ການພັດທະນາກະສິກຳຕິດພັນກັບໂພຊະນາການ**
ຍຸດທະສາດ 7. ນຳໃຊ້ຂໍ້ມູນດ້ານໂພຊະນາການ ເພື່ອສະໜອງເປັນຂໍ້ມູນພື້ນຖານໃນການຄ້ຳປະກັນສະບຽງອາຫານ ແລະ ນະໂຍບາຍດ້ານກະສິກຳ
ຍຸດທະສາດ 8. ກຳນົດນະໂຍບາຍ, ອົງການຈັດຕັ້ງ ແລະ ກົນໄກການຄຸ້ມຄອງ ເພື່ອພັດທະນາກະສິກຳຕິດພັນກັບ ໂພຊະນາການໃນປະເທດສະມາຊິກອາຊຽນ.
ຍຸດທະສາດ 9. ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ໃນການສ້າງນະໂຍບາຍດ້ານໂພຊະນາການ/ແຜນງານ ແລະ ສ້າງຄວາມເຂັ້ມແຂງ ສຳລັບການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ.

# ແຜນຍຸດທະສາດ ຈັດຕັ້ງປະຕິບັດ ການຄໍ້າປະກັນສະບຽງອາຫານໃນ ອາຊຽນ 2015-2020

ແຜນຍຸດທະສາດ ຈັດຕັ້ງປະຕິບັດ ການຄໍ້າປະກັນສະບຽງອາຫານໃນ ອາຊຽນ (SPA-FS) 2015-2020 ໄດ້ປະກອບມີ 9 ຍຸດທະສາດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ບັນດາອົງປະກອບໜ້າວຽກ ຢູ່ໃນແຜນງານ AIFS. ແຕ່ລະຍຸດທະສາດ ປະກອບມີ ແຜນຈັດຕັ້ງປະຕິບັດ, ກິດຈະກໍາ, ໜ່ວຍງານຮັບຜິດຊອບ ແລະ ໄລຍະເວລາຈັດຕັ້ງປະຕິບັດ.

ກິດຈະກໍາຍ່ອຍ ແມ່ນໄດ້ກໍານົດຂຶ້ນມາ ເພື່ອພິຈາລະນາ ແລະ ຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ. ລາຍລະອຽດຂໍ້ມູນ ກ່ຽວກັບ ຍຸດທະສາດ SPA-FS ແມ່ນໄດ້ສັງລວມໄວ້ໃນຕາຕະລາງ, ເອກະສານຊ້ອນທ້າຍ **ANNEX 1.**

## ຍຸດທະສາດ/ແຜນຈັດຕັ້ງປະຕິບັດ/ກິດຈະກໍາ

## ຍຸດທະສາດ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ ການຄໍ້າປະກັນສະບຽງອາຫານ ລວມທັງມາດຕະການກະກຽມການບັນເທົາທຸກ ໃນໄລຍະສັ້ນ/ສຸກເສີນ

### ໝາກຜົນ 1.1 ຄັງແຮສະບຽງອາຫານຂອງອາຊຽນໄດ້ດໍາເນີນການເປັນລະບົບ

<u>ກິດຈະກໍາ 1.1.1.</u> ຈັດກອງປະຊຸມວິຊາການ ກ່ຽວກັບ ການຈັດຕັ້ງປະຕິບັດ APTERR ຢູ່ແຕ່ລະປະເທດ, ກວມເອົາການສ້າງຕັ້ງລະບົບການລະບາຍຄັງແຮອາຫານ.

<u>ກິດຈະກໍາ 1.1.2.</u> ລວບລວມຂໍ້ມູນ ແລະ ເຮັດການວິເຄາະ ເພື່ອກະກຽມບົດລາຍງານໃຫ້ແກ່ກອງປະຊຸມວິຊາການ.

<u>ກິດຈະກໍາ 1.1.3</u>. ສະພາ APTERR ໃຫ້ການຊ່ວຍເຫຼືອ ແກ່ປະເທດສະມາຊິກ APTERR ເພື່ອສ້າງຕັ້ງກົນໄກຈັດຕັ້ງປະຕິບັດ ຢູ່ແຕ່ລະປະເທດ ພ້ອມທັງລະບົບການຕິດຕາມປະເມີນຜົນ.

<u>ກິດຈະກໍາ 1.1.4.</u> ຈັດກິດຈະກໍາສ້າງຂີດຄວາມສາມາດ (ເຊັ່ນ: ການຝຶກອົບຮົມ) ສໍາລັບສະມາຊິກ APTERR ແລະ ກອງເລຂາ.

<u>ກິດຈະກໍາ 1.1.5</u> ຮ່ວມມືກັບ ກອງເລຂາ AFSIS ແລະ ໜ່ວຍງານຮັບຜິດຊອບອາຫານລະດັບຊາດ ເພື່ອສະໜອງຂໍ້ມູນການຕິດຕາມປະເມີນຜົນຂອງອາຫານສຸກເສີນເປັນ

ໄລຍະ (FEMI).

<u>ກິດຈະກຳ 1.1.6.</u> ເຮັດການສຶກສາຄວາມເປັນໄປໄດ້ ໃນການຂະຫຍາຍຂອບເຂດ ຂອງຜະລິດຕະພັນອາຫານ ແລະ ການກຳນົດກົນໄກທີ່ເໝາະສົມ.

**ໝາກຜົນ 2.1: ມີຕ່ອງໂສ້ການສະໜອງອາຫານແບບຍັ້ງຢືນ ໂດຍເນັ້ນໃສ່ຂະແໜງເມັດພັນ.**

<u>ກິດຈະກຳ 1.2.1.</u> ຈັດກອງປະຊຸມວິຊາການ ກ່ຽວກັບ ສະພາເມັດພັນຂອງອາຊຽນ (ASC).

<u>ກິດຈະກຳ 1.2.2.</u> ເກັບຂໍ້ມູນ ແລະ ເຮັດການວິເຄາະ ເພື່ອສະໜອງຂໍ້ມູນໃຫ້ແກ່ ກອງປະຊຸມວິຊາການຂອງ ASC.

<u>ກິດຈະກຳ 1.2.3</u> ໃຫ້ການຊ່ວຍເຫຼືອແກ່ ສະພາຂອງ ASC ເພື່ອສ້າງຕັ້ງກົນໄກຈັດຕັ້ງປະຕິບັດ ຢູ່ແຕ່ລະປະເທດ ພ້ອມທັງລະບົບຕິດຕາມ ແລະ ປະເມີນຜົນ.

<u>ກິດຈະກຳ 1.2.4</u>. ຈັດກິດຈະກຳ ການສ້າງຂີດຄວາມສາມາດ (ເຊັ່ນ: ການຝຶກອົບຮົມ) ໃຫ້ແກ່ ສະມາຊິກ ASC ແລະ ກອງເລຂາ.

<u>ກິດຈະກຳ 1.2.5</u>. ສ້າງເວທີແລກປ່ຽນຂໍ້ມູນຂ່າວສານ ບັນຫາຕ່າງໆ ກ່ຽວກັບຂະແໜງເມັດພັນ.

<u>ກິດຈະກຳ 1.2.6.</u> ອຳນວຍຄວາມສະດວກ ທາງດ້ານວິຊາການ ແລະ ການຮ່ວມມື ທາງດ້ານເສດຖະກິດ-ສັງຄົມຂອງ ຜູ້ມີສ່ວນຮ່ວມໃນຂະແໜງການ.

<u>ກິດຈະກຳ 1.2.7.</u> ສ້າງລະບຽບ ແລະ ກົດໝາຍ ກ່ຽວກັບ ເມັດພັນໃຫ້ມີຄວາມກົມກຽວກັນ ພາຍໃນອາຊຽນ.

## ຍຸດທະສາດ 2: ສົ່ງເສີມການຕະຫຼາດ ແລະ ການຄ້າອາຫານ

**ໝາກຜົນ 2.1: ມີຊ່ອງທາງການຄ້າອາຫານຂອງພາກພື້ນຫຼາກຫຼາຍຂຶ້ນ, ລາຄາຄົງທີ່ ແລະ ບໍ່ແພງເກີນໄປ.**

<u>ກິດຈະກຳ 2.1.1</u>. ຈັດກອງເວທີປຶກສາຫາລື ກ່ຽວກັບ ການຄ້າເຂົ້າ (ຫຼື ອາຫານ) ເພື່ອປຶກສາຫາລື: ຂະບວນການ ແລະ ຫຼັກການທີ່ພົວພັນເຖິງການນຳໃຊ້ຂໍ້ຈຳກັດດ້ານລາຄາໃນການຄ້າເຂົ້າ ແລະ ການປະຕິບັດຂອງຫົວໜ່ວຍທຸລະກິດຢູ່ພາຍໃນປະເທດ, ການອຳນວຍຄວາມສະດວກດ້ານການຄ້າ, ສ້າງຄວາມເຂັ້ມແຂງຕ່ອງໂສ້ການສະໜອງ, ສ້າງຄວາມຫຼາກ

ຫຼາຍດ້ານການບໍລິໂພກອາຫານ, ໃຫ້ພາກສ່ວນເອກະຊົນ ແລະ ຄູ່ເຈລະຈາເຊິ່ງມີບົດບາດສຳຄັນໃນຕະຫຼາດສາກົນມີສ່ວນຮ່ວມຫຼາຍຂຶ້ນ.

ກິດຈະກຳ 2.1.2. ຈັດສຳມະນາວິຊາການຂອງ AFSRB ເພື່ອກະກຽມໃຫ້ ກອງປະຊຸມການຄ້າອາຫານອາຊຽນ

ກິດຈະກຳ 2.1.3. ເກັບຂໍ້ມູນ ແລະ ວິເຄາະຂໍ້ມູນເຊັ່ນ: ສະພາບດ້ານນະໂຍບາຍຕະຫຼາດເຂົ້າ, ຜົນກະທົບຂອງການເຮັດສັນຍາຮ່ວມກັບຊາວກະສິກອນຂະໜາດນ້ອຍ ແລະ ການສຶກສາອື່ນໆທີ່ກ່ຽວຂ້ອງ, ເພື່ອສະໜອງໃຫ້ແກ່ ກອງປະຊຸມວິຊາການຂອງ AFSRB.

ກິດຈະກຳ 2.1.4. ອີງໃສ່ຜົນການປຶກສາຫາລືໃນກອງປະຊຸມ, ຂໍ້ແນະນຳຕ່າງໆ ຈະສະເໜີຕໍ່ກອງປະຊຸມ AFSRB ເພື່ອປຶກສາຫາລືໃນຂັ້ນຕໍ່ໄປ.

ກິດຈະກຳ 2.1.5. ຈັດກອງປະຊຸມ ປຶກສາຫາລືກ່ຽວກັບ ອາຫານທະເລ ໂດຍສະເພາະແມ່ນເນັ້ນໃສ່ຂໍ້ກີດກັ້ນທາງດ້ານວິຊາການ ທີ່ມີຕໍ່ການຄ້າອາຫານຕະເລ ເພື່ອເປັນແນວທາງໃນການສົ່ງເສີມການເຄື່ອນຍ້າຍປາ ແລະ ຜະລິດຕະພັນປາ ທີ່ມີຈຸດປະສົງນຳໃຊ້ສຳລັບການບໍລິໂພກຂອງຄົນ.

**ໝາກຜົນ 2.2. ສ້າງຄວາມເຂັ້ມແຂງໃຫ້ແກ່ AFSRB ຊຶ່ງເປັນໜ່ວຍງານທີ່ເຮັດໜ້າທີ່ໃຫ້ການປຶກສາດ້ານນະໂຍບາຍການຄໍ້າປະກັນສະບຽງອາຫານ ໃຫ້ແກ່ SOM-AMAF**

ກິດຈະກຳ 2.2.1. ຈັດກິດຈະກຳສ້າງຄວາມເຂັ້ມແຂງ (ເຊັ່ນ ຝຶກອົບຮົມ) ໃຫ້ແກ່ສະມາຊິກ AFSRB ແລະ ກອງເລຂາ.

## ຍຸດທະສາດ 3: ສ້າງຄວາມເຂັ້ມແຂງດ້ານການເຊື່ອມໂຍງຂໍ້ມູນຂ່າວສານດ້ານການຄໍ້າປະກັນສະບຽງອາຫານ ເພື່ອເຮັດໃຫ້ການພະຍາກອນ, ການວາງແຜນ ແລະ ການຕິດຕາມ ແລະ ການຊົມໃຊ້ ຜະລິດຕະພັນທີ່ເປັນອາຫານພື້ນຖານ.

**ໝາກຜົນ 3.1. AFSIS ໄດ້ຮັບການສ້າງຕັ້ງຂຶ້ນ ເປັນໜ່ວຍງານຖາວອນ ແລະ ສາມາດປະຕິບັດງານໄດ້ ໃນການເຕືອນໄພເບື້ອງຕົ້ນ, ການຕິດຕາມ ພ້ອມທັງເປັນລະບົບເຝົ້າລະວັງທີ່ເຂັ້ມແຂງ ສຳລັບເປັນຂໍ້ມູນ ແລະ ຂ່າວສານດ້ານຕະຫຼາດອາຫານ ຢູ່ໃນພາກພື້ນ.**

ກິດຈະກຳ 3.1.1. ສ້າງຕັ້ງ AFSIS ເປັນໜ່ວຍງານຖາວອນ, ສາມາດກຸ້ມຕົນເອງດ້ານການບໍລິຫານຈັດການ, ລະບົບການປະຕິບັດງານແບບເອກະລາດ ຕາມຄຳໝັ້ນສັນຍາຂອງປະເທດສະມາຊິກ, ແຕ່ງຕັ້ງກອງເລຂາຮັບຜິດຊອບຖາວອນ ຢູ່ແຕ່ລະປະເທດ

ສະມາຊິກພ້ອມທັງປຶກສາຫາລືກັບປະເທດອາຊຽນ +3 ເພື່ອຂໍການຮ່ວມມື ແລະ ການຊ່ວຍເຫຼືອທາງດ້ານວິຊາການ.

ກິດຈະກໍາ 3.1.2. ເກັບກໍາ ແລະ ອັບເດດຂໍ້ມູນ ກ່ຽວກັບການຄໍ້າປະກັນສະບຽງອາຫານຢູ່ເປັນປົກກະຕິ.

ກິດຈະກໍາ 3.1.3. ເຮັດການປະເມີນຜົນສະພາບເຂົ້າ ແລະ ຜົນຜະລິດອື່ນໆ ຢູ່ປະເທດສະມາຊິກ ເປັນໄລຍະ ຢູ່ໃນບັນດາປະເທດອາຊຽນ +3 ເພື່ອເບິ່ງສະພາບຂອງຕະຫຼາດໂລກ ໂດຍອີງໃສ່ຂໍ້ມູນການຕະຫຼາດທີ່ເປັນປະຈຸບັນ, ນໍາໃຊ້ຂໍ້ມູນທີ່ມີຢູ່ ແລະ ການວິເຄາະທາງດ້ານປະລິມານ.

ກິດຈະກໍາ 3.1.4. ຮ່ວມມືກັບອົງການຈັດຕັ້ງດ້ານການຄໍ້າປະກັນສະບຽງອາຫານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງກັບ ການພັດທະນາມາດຕະຖານຄຸນນະພາບ ແລະ ການປະຕິບັດທີ່ດີ ເພື່ອສ້າງລະບົບຂໍ້ມູນຂ່າວສານດ້ານການຄໍ້າປະກັນສະບຽງອາຫານ ແລະ ການພັດທະນາຊັບພະຍາກອນມະນຸດ.

## ຍຸດທະສາດ 4: ສົ່ງເສີມການຜະລິດອາຫານແບບຍືນຍົງ

**ໝາກຜົນ 4.1. ໝາກຜົນດ້ານການຄົ້ນຄວ້າ-ທົດລອງ, ປັບປຸງການຜະລິດກະສິກໍາ ແລະ ຕ່ອງໂສ້ການສະໜອງການແຈກຢາຍ ພ້ອມທັງອໍານວຍຄວາມສະດວກໃນການເຂົ້າເຖິງ.**

ກິດຈະກໍາ 4.1.1. ສ້າງ ແລະ ນໍາໃຊ້ ເຕັກໂນໂລຊີ ຖ່າຍທອດເຕັກໂນໂລຊີໃໝ່ ແລະ ການປະຕິບັດ ຢູ່ແຕ່ລະຂັ້ນຕອນການຜະລິດກະສິກໍາ ແລະ ຕ່ອງໂສ້ມູນຄ່າເພີ່ມ ແລະ ອໍານວຍຄວາມສະດວກໃນການເຂົ້າເຖິງ ໃຫ້ແກ່ ຜູ້ຜະລິດຂອງອາຊຽນ ເພື່ອປັບປຸງຜະລິດຕະພາບ ແລະ ປະສິດຕິພາບ ຕ່ອງໂສ້ມູນຄ່າເພີ່ມ ແລະ ຜົນຜະລິດ ແລະ ຄວາມປອດໄພ.

ກິດຈະກໍາ 4.1.2. ສົ່ງເສີມການຮ່ວມມືລະຫວ່າງ NARS ຂອງ AMAF, IARCS ເພື່ອຈັດຕັ້ງແຜນກິດຈະກໍາ ຂອງ IRRI ແລະ ແຜນພັດທະນາພືດອື່ນໆເຊັ່ນ: ສາລີ.

ກິດຈະກໍາ 4.1.3. ສົ່ງເສີມໃຫ້ມີການຮ່ວມມືລະຫວ່າງ NARS, IARCS, ພາກເອກະຊົນ ອົງກອນຈັດຕັ້ງຊາວກະສິກອນ, ເພື່ອຂະຫຍາຍການຜະລິດພືດຜັກ ແລະ ໄມ້ໃຫ້ໝາກ ໃນເຂດຕົວເມືອງ ແລະ ຊົນນະບົດ, ໂດຍການສະໜອງເມັດພັນທີ່ມີຄຸນນະພາບ ແລະ ພຽງພໍ, ອຸປະກອນທີ່ນໍາໃຊ້ສໍາລັບການປູກ ແລະ ລະບົບການສົ່ງເສີມໃຫ້ແກ່ ຜູ້ຜະລິດພືດຜັກ ແລະ ໝາກໄມ້.

ກິດຈະກໍາ 4.1.4. ສົ່ງເສີມເຕັກນິກ ແລະ ເຕັກໂນໂລຊີ ເພື່ອຫຼຸດຜ່ອນຜົນເສຍຫາຍຫຼັງເກັບກ່ຽວ ຢູ່ບັນດາປະເທດ ສະມາຊິກອາຊຽນ.

ກິດຈະກຳ 4.1.5. ປະສານງານ ແລະ ໃຫ້ການຊ່ວຍເຫຼືອ ກິດຈະກຳດ້ານການຄົ້ນຄ້ວາ, ພັດທະນາ ແລະ ການຜະລິດ ເປັນສິນຄ້າ ໃນຂະແໜງເມັດພັນ ຢູ່ໃນປະເທດສະມາຊິກ.

ກິດຈະກຳ 4.1.6. ສົ່ງເສີມການຄົ້ນຄວ້າທົດລອງ ແລະ ການພັດທະນາ ທາງເລືອກໃໝ່ ແຫຼ່ງວັດຖຸດິບອາຫານປາ ເພື່ອຜະລິດເປັນອາຫານປາ.

ກິດຈະກຳ 4.1.7. ສົ່ງເສີມ ແລະ ຂະຫຍາຍຄວາມຮູ້ໃຫ້ແກ່ຊາວກະສິກອນ ນອກຈາກນີ້ ຄວາມຮູ້ດ້ານກະສິກຳເຊັ່ນ: ການຄວາມຮູ້ດ້ານເສດຖະກິດກະສິກຳ ແລະ ການພັດທະນາ ເປັນທຸລະກິດ.

## ຍຸດທະສາດ 5: ຊຸກຍູ້ໃຫ້ມີການລົງທຶນໃສ່ພາກການຜະລິດອາຫານ ແລະ ອຸດສາຫະກຳປຸງແຕ່ງ ເພື່ອເພີ່ມຄວາມໝັ້ນຄົງດ້ານ ສະບຽງອາຫານ.

**ໝາກຜົນ 5.1. ການລົງທຶນໃສ່ພາກຜະລິດອາຫານ ແລະ ອຸດສາຫະກຳປຸງແຕ່ງໄດ້ຮັບການຂະຫຍາຍຢ່າງໝັ້ນຄົງ.**

ກິດຈະກຳ 5.1.1. ກະກຽມແຜນຈັດຕັ້ງປະຕິບັດ “roadmaps” ຂອງຕ່ອງໂສ້ການສະໜອງອາຫານ ແລະ ອຸດສາຫະກຳປຸງແຕ່ງ ໂດຍການມີສ່ວນຮ່ວມຂອງ ຜູ້ຜະລິດຂະໜາດນ້ອຍ, ການກະຈາຍຂໍ້ມູນຂ່າວສານໂອກາດການລົງທຶນສຳລັບ SMEs, ອຳນວຍຄວາມສະດວກປະສານງານການລົງທຶນ ໂດຍເນັ້ນໃສ່ການມີສ່ວນຮ່ວມລະຫວ່າງລັດ-ເອກະຊົນ, ການມີສ່ວນຮ່ວມຂອງຊຸມຊົນ ກັບ ລັດ ໄປຄຽງຄູ່ກັບຕ່ອງໂສ້ການສະໜອງອຸດສາຫະກຳປຸງແຕ່ງ.

ກິດຈະກຳ 5.1.2. ສະໜັບສະໜູນການພັດທະນາຕ່ອງໂສ້ການສະໜອງອາຫານ ແລະ ກະສິກຳ ໂດຍການຮ່ວມມືລະຫວ່າງລັດ-ເອກະຊົນ.

## ຍຸດທະສາດ 6: ກຳນົດບັນຫາ ແລະ ວິທີແກ້ໄຂ ທີ່ພົວພັນເຖິງການຄ້ຳປະກັນສະບຽງອາຫານ.

**ໝາກຜົນ 6.1. ຜົນກະທົບໄລຍະຍາວ ຂອງການພັດທະນາພະລັງງານຊີວະພາບ ຕໍ່ກັບການຄ້ຳປະກັນສະບຽງອາຫານໄດ້ຮັບການກຳນົດຂຶ້ນມາ.**

ກິດຈະກຳ 6.1.1. ເຮັດການສຶກສາຜົນກະທົບໄລຍະຍາວ ຂອງການພັດທະນາພະລັງງານຊີວະພາບ ແລະ ການຄ້ຳປະກັນສະບຽງອາຫານໃນອາຊຽນ.

**<u>ໝາກຜົນ 6.2</u>. ແນະນຳການນຳໃຊ້ ວິທີການກະສິກຳ ທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ[3] ໃນບັນດາປະເທດສະມາຊິກ.**

<u>ກິດຈະກຳ 6.2.1</u>. ສາທິດທົດລອງ ການທົດສອບເຕັກໂນໂລຊີ ແລະ ການປະຕິບັດ (ເຊັ່ນ ກະສິກຳແບບອະນຸລັກ, SRI, ການຜະລິດທີ່ມີການປູກ-ລ້ຽງໄປຄວບຄູ່ກັນ, ກະສິກຳອິນຊີ, ແນວພັນພືດທີ່ທົດແລ້ງ-ຖ້ວມ ແລະ ອື່ນໆ) ເຂົ້າໃນຮູບແບບການຜະລິດກະສິກຳທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນບັນດາປະເທດສະມາຊິກອາຊຽນ.

**ໝາກຜົນ 6.3 ຜົນກະທົບດ້ານການປ່ຽນແປງໂຄງປະກອບປະຊາກອນ ແລະ ການຂະຫຍາຍຕົວເມືອງ ຕໍ່ກັບການຄ້ຳປະກັນສະບຽງອາຫານໄດ້ກຳນົດຂຶ້ນມາ**.

<u>ກິດຈະກຳ 6.3.1</u>. ເຮັດການສຶກສາຜົນກະທົບການປ່ຽນແປງໂຄງປະກອບດ້ານປະຊາກອນໄລຍະຍາວ (ບົດບາດຍິງຊາຍ, ແຮງງານຊາວໜຸ່ມເຄື່ອນຍ້າຍອອກຈາກພາກກະສິກຳ, ການຂະຫຍາຍຕົວເມືອງ ແລະ ການຫັນປ່ຽນດິນກະສິກຳ) ຕໍ່ການຄ້ຳປະກັນສະບຽງອາຫານອາຊຽນ.

<u>ກິດຈະກຳ 6.3.2.</u> ສ້າງຂໍ້ແນະນຳ ຫຼື ສະເໜີທາງເລືອກ ຕໍ່ກັບຜົນກະທົບທີ່ເກີດຈາກການປ່ຽນແປງ ໂຄງປະກອບ ປະຊາກອນ ແລະ ການຂະຫຍາຍຕົວເມືອງ.

## ຍຸດທະສາດ 7. ນຳໃຊ້ຂໍ້ມູນດ້ານໂພຊະນາການ ເພື່ອສະໜອງເປັນຂໍ້ມູນໃຫ້ແກ່ການຄ້ຳປະກັນສະບຽງອາຫານ ແລະ ນະໂຍບາຍດ້ານກະສິກຳ.

**ໝາກຜົນ 7.1. ຂໍ້ມູນດ້ານໂພຊະນາການ ແລະ ຕົວຊີ້ວັດ ສຳລັບຕິດຕາມການຄ້ຳປະກັນສະບຽງອາຫານ ແລະ ນະໂຍບາຍ ໄດ້ກຳນົດ/ນິຍາມຂຶ້ນມາ.**

<u>ກິດຈະກຳ 7.1.1.</u> ຈັດສຳມະນາພາກພື້ນເພື່ອກຳນົດ/ນິຍາມ ຂໍ້ມູນດ້ານໂພຊະນາການ ແລະ ຕົວຊີ້ວັດ, ວິທີການເກັບກຳ/ລວບລວມຂໍ້ມູນ ເພື່ອຕິດຕາມ ແລະ ປະເມີນຜົນດ້ານການຄ້ຳປະກັນສະບຽງອາຫານ ແລະ ການສ້າງນະໂຍບາຍ.

**ໝາກຜົນ 7.2 ກຸ່ມຂໍ້ມູນດ້ານໂພຊະນາການໄດ້ພັດທະນາຂຶ້ນ ແລະ ໄດ້ບັນຈຸເຂົ້າໃນແຜນຂອງ AFSIS ຫຼື ອາດຈະນຳໃຊ້ເຂົ້າໃນກົນໄກອື່ນໆ.**

---

[3] ການຜະລິດກະສິກຳຕິດທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແມ່ນວິທີການໃໝ່ ເພື່ອຮັບປະກັນຄວາມ ໝັ້ນຄົງດ້ານ ສະບຽງອາຫານ ແລະ ໂພຊະນາການ, ເພີ້ມຜະລິດຕະພາບ ແລະ ລາຍຮັບ, ສາມາດເພິ່ງຕົນເອງໄດ້ໃນເວລາມີການປ່ຽນແປງ ດິນຟ້າອາກາດ ພ້ອມທັງຫຼຸດຜ່ອນອາຍພິດເຮືອນແກ້ວ.

ກິດຈະກຳ 7.2.1. ເຮັດການສຶກສາສຳລັບພັດທະນາ ແລະ ເຮັດການທົດລອງ ກຸ່ມຂໍ້ມູນດ້ານໂພຊະນາການ ເພື່ອບັນຈຸລົງໃນຖານຂໍ້ມູນຂອງ AFSIS ຫຼື ດ້ວຍກົນໄກອື່ນໆ.

**ໝາກຜົນ 7.3. ນຳໃຊ້ຂໍ້ມູນດ້ານໂພຊະນາການ ໃນການສ້າງນະໂຍບາຍການຄ້ຳປະກັນສະບຽງອາຫານ ແລະ ນະໂຍບາຍດ້ານກະສິກຳ.**

ກິດຈະກຳ 7.3.1. ປັບປຸງ ຫຼື ສ້າງຄວາມເຂັ້ມແຂງໃຫ້ແກ່ ລະບົບຂໍ້ມູນ AFSIS ພ້ອມກັບຂໍ້ມູນດ້ານໂພຊະນາການ ອື່ນໆ.

ກິດຈະກຳ 7.3.2. ສ້າງນະໂຍບາຍຊຸກຍູ້ດ້ານໂພຊະນາການ ເພື່ອນຳສະເໜີໃຫ້ແກ່ຂະແໜງການອື່ນໆຂອງອາຊຽນ.

## ຍຸດທະສາດ 8. ກຳນົດນະໂຍບາຍ, ການຈັດຕັ້ງ ແລະ ກົນໄກການຄຸ້ມຄອງສຳລັບການພັດທະນາກະສິກຳຕິດພັນກັບໂພຊະນາການໃນປະເທດອາຊຽນ.

**ໝາກຜົນ 8.1.** ໄດ້ມີການປູກຈິດສຳນຶກໃຫ້ແກ່ ພາກສ່ວນທີ່ກ່ຽວຂ້ອງ ແລະ ມີການຮັບຮູ້ ກ່ຽວກັບຄວາມສຳຄັນ ຂອງອາຫານ, ກະສິກຳ ແລະ ປ່າໄມ້[4].

ກິດຈະກຳ 8.1.1. ສ້າງ ແລະ ແຈກຢາຍຂໍ້ມູນ ກ່ຽວກັບການປູກຈິດສຳນຶກ ເນັ້ນໃສ່ກຸ່ມເປົ້າໝາຍທີ່ມີສ່ວນຮ່ວມ ໃນຂະແໜງອາຫານ, ກະສິກຳ ແລະ ປ່າໄມ້ ໃຫ້ຮູ້ກ່ຽວກັບຄວາມສຳຄັນຂອງໂພຊະນາການ ໃນການຄ້ຳປະກັນສະ ບຽງອາຫານ.

ກິດຈະກຳ 8.1.2. ຈັດເວທີຕ່າງໆໃນລະດັບປະເທດ ແລະ ພາກພື້ນ ເພື່ອປູກຈິດສຳນຶກກ່ຽວກັບໂພຊະນາການ.

**ໝາກຜົນ 8.2. ນະໂຍບາຍ ແລະ ກົນໄກສະໜັບສະໜູນປະເທດສະມາຊິກອາຊຽນ.**

ກິດຈະກຳ 8.2.1. ຈັດສຳມະນາປະຈຳປີລະຫວ່າງ SOM-AMAF ແລະ ຂະແໜງການອື່ນໆຂອງອາຊຽນ ເພື່ອເຮັດ ໃຫ້ການເຊື່ອມໂຍງ ແລະ ການປະສານງານກັນດີຂຶ້ນ ໃນດ້ານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໂດຍການສະໜັບສະໜູນຈາກຄູ່ຮ່ວມເຈລະຈາ ແລະ ພັດທະນາ.

[4] ຜູ້ມີສ່ວນຮ່ວມຫຼັກເຊັ່ນ: ເຈົ້າໜ້າທີ່ລັດຖະບານ, ກຸ່ມຊາວກະສິກອນ, CSOs, ພາກສ່ວນເອກະຊົນ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ທີ່ກ່ຽວຂ້ອງກັບ ການຜະລິດອາຫານ, ກະສິກຳ ແລະ ປ່າໄມ້.

ກິດຈະກຳ 8.2.2. ອຳນວຍຄວາມສະດວກໃນການປຶກສາຫາລືດ້ານນະໂຍບາຍ ເພື່ອສະໜັບສະໜູນການປະສານງານ ແລະ ການຄຸ້ມຄອງ ດ້ານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ໃຫ້ມີສ່ວນຮ່ວມ ຂອງທຸກພາກສ່ວນ ທີ່ກ່ຽວຂ້ອງກັບ ອາຫານ, ກະສິກຳ ແລະ ປ່າໄມ້, ພ້ອມທັງການກະກຽມ ຄວາມພ້ອມດ້ານການຈັດຕັ້ງ/ ຮູບແບບຕ່າງໆ.

ກິດຈະກຳ 8.2.3. ສ້າງຄູ່ຮ່ວມຍຸດທະສາດ ແລະ ຄູ່ຮ່ວມງານຫຼັກ ເພື່ອສ້າງຄວາມເຂັ້ມແຂງໃນລະດັບປະເທດ ແລະ ພາກພື້ນ, ການປຶກສາຫາລືດ້ານນະໂຍບາຍ ແລະ ການສ້າງຄວາມເປັນເອກະພາບ ພ້ອມທັງການສະໜັບສະໜູນ ລະຫວ່າງປະເທດສະມາຊິກ ແລະ ຜູ້ມີສ່ວນຮ່ວມຕ່າງໆ ເພື່ອແກ້ໄຂບັນຫາການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຢູ່ໃນພາກພື້ນ.

## ຍຸດທະສາດ 9. ພັດທະນາ ແລະ ສ້າງຄວາມເຂັ້ມແຂງດ້ານຜະລິດອາຫານໂພຊະນາການ, ການສ້າງນະໂຍບາຍ/ແຜນງານຂອງຂະແໜງກະສິກຳ ແລະ ປ່າໄມ້ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ.

**ໝາກຜົນ 9.1. ອາຫານໂພຊະນການ, ນະໂຍບາຍກະສິກຳ ແລະ ປ່າໄມ້ ແລະ ແຜນງານຕ່າງໄດ້ຮັບການພັດທະນາ ແລະ ສ້າງຄວາມເຂັ້ມແຂງ.**

ກິດຈະກຳ 9.1.1. ສ້າງຄວາມເຂັ້ມແຂງໃຫ້ແກ່ ຂະແໜງການຫຼັກດ້ານໂພຊະນາການ ແລະ ສ້າງນະໂຍບາຍ ແລະ ແຜນງານ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຜະລິດອາຫານ, ກະສິກຳ ແລະ ປ່າໄມ້.

ກິດຈະກຳ 9.1.2. ເຮັດການສຶກສາ, ຈັດສຳມະນາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ຕັດສິນດ້ານນະໂຍບາຍ/ພະນັກງານ ໃນການສ້າງນະໂຍບາຍ ອາຫານໂພຊະນາການ, ກະສິກຳ ແລະ ປ່າໄມ້, ຍຸດທະສາດ ແລະ ແຜນງານການລົງ ທຶນ.

ກິດຈະກຳ 9.1.3. ສ້າງຄູ່ມືແນະນຳ ແລະ ເຄື່ອງມືໃນການສ້າງນະໂຍບາຍ/ແຜນງານ ໃຫ້ແກ່ຂະແໜງການລັດ ແລະ ຂະແໜງການທີ່ກ່ຽວຂ້ອງການຜະລິດອາຫານ, ກະສິກຳ ແລະ ປ່າໄມ້.

**<u>ໝາກຜົນ 9.2.</u> ໄດ້ສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນອາຫານໂພຊະນາການ, ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂະແໜງກະສິກຳ ແລະ ປ່າໄມ້.**

<u>ກິດຈະກຳ **9.2.1.**</u> ສ້າງຄູ່ມື ແລະ ເຄື່ອງມື ສຳລັບການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ ໃນລະດັບຊາດ ແລະ ພາກພື້ນ ໃຫ້ແກ່ຂະແໜງການຫຼັກດ້ານໂພຊະນາການ, ນະໂຍບາຍ ແລະ ແຜນງານ ຂອງຂະແໜງການທີ່ກ່ຽວຂ້ອງ ການຜະລິດອາຫານ, ກະສິກຳ ແລະ ປ່າໄມ້.

<u>ກິດຈະກຳ **9.2.2.**</u> ສ້າງຄວາມເຂັ້ມແຂງໃຫ້ແກ່ ການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນດ້ານນະ ໂຍບາຍ, ຍຸດທະສາດ ແລະ ແຜນງານຕ່າງໆ.

**<u>ໝາກຜົນ 9.3.</u> ແຜນງານຕ່າງໆທີ່ພົວພັນເຖິງອາຫານໂພຊະນາການ, ກະສິກຳ ແລະ ປ່າໄມ້ ໄດ້ກຳນົດຂຶ້ນມາ, ໄດ້ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ.**

<u>ກິດຈະກຳ **9.3.1.**</u> **ກຳນົດ ແລະ ຈັດຕັ້ງປະຕິບັດແຜນກິດຈະກຳບຸລິມະສິດ ລວມທັງມີການຕິດຕາມປະເມີນຜົນ.**

## <u>ການຈັດຕັ້ງປະຕິບັດ</u>

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ໂດຍການສະໜັບສະໜູນໂດຍກອງເລຂາອາຊຽນ**, **ເຊິ່ງເປັນໜ່ວຍງານທີ່ຮັບຜິດຊອບຫຼັກໃນການຈັດຕັ້ງປະຕິບັດແຜນງານຄ້ຳປະກັນສະບຽງອາຫານ** AIFS **ແລະ ຍຸດທະສາດ** SPA-FS**. ໂດຍອີງໃສ່ການມອບໝາຍຈາກກອງປະຊຸມ ສຸດຍອດຜູ້ນຳອາຊຽນ ຫຼື** ASEAN Summit, **ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ຈະເປັນໜ່ວຍງານຫຼັກ ໃນການປະສານງານ ໃນການຈັດຕັ້ງປະຕິບັດ ແຜນງານຄ້ຳປະກັນສະບຽງອາຫານ** AIFS **ແລະ ຍຸດທະສາດ** SPA-FS **ຮ່ວມກັບຂະແໜງການອື່ນໆ ພາຍໃຕ້ກອບ** AEC **ແລະ** ASCC.

**ຊັບພະຍາກອນເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດແຜນງານຄ້ຳປະກັນສະບຽງອາຫານ** AIFS **ແລະ ຍຸດທະສາດ** SPA-FS **ແມ່ນໄດ້ມາຈາກການສົມທົບທຶນຮ່ວມກັນຂອງປະເທດສະມາຊິກ; ນອກຈາກນັ້ນ ກໍ່ອາດມາຈາກການສະໜັບສະໜູນທຶນ ຂອງຄູ່ຮ່ວມເຈລະຈາ ແລະ ອົງການຊ່ວຍເຫຼືອຕ່າງໆ. ກະຕຸກຊຸກຍູ້**

**ໃຫ້ ຜູ້ມີສ່ວນຮ່ວມຕ່າງໆ (ເຊັ່ນ ສະມາຄົມສະຫະກອນກະສິກຳ, ອົງການພັດທະນາສັງຄົມ) ມີສ່ວນຮ່ວມຫຼາຍຂຶ້ນ ໃນການຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນແຜນຈັດຕັ້ງປະຕິບັດຍຸດທະສາດ SPA-FS.**

## ການທົບທວນ

ການຈັດຕັ້ງປະຕິບັດແຜນງານຄ້ຳປະກັນສະບຽງອາຫານ **AIFS** ແລະ ຍຸດທະສາດ **SPA-FS** 2015-2020 ຕ້ອງໄດ້ຖືກທົບທວນ. ຕ້ອງໄດ້ເຮັດການປະເມີນຜົນກາງສະໄໝ ແລະ ການປະເມີນຜົນຄັ້ງສຸດທ້າຍ, ໃນປີ 2018 ແລະ ປີ 2020, ຕາມລຳດັບ.

## ຕົວອັກສອນຫຍໍ້

| | |
|---|---|
| ABF | ເວທີສົນທະນາທຸລະກິດອາຊຽນ |
| ADB | ທະນາຄານພັດທະນາອາຊີ |
| AEC | ປະຊາຄົມເສດຖະກິດອາຊຽນ |
| AEM | ລັດຖະມົນຕີເສດຖະກິດອາຊຽນ |
| AFCC | ແຜນຮັບມືການປ່ຽນແປງດິນຟ້າອາກາດຂອງອາຊຽນ: ກະສິກຳ ແລະ ປ່າໄມ້ ຕໍ່ກັບການຄ້ຳປະກັນສະບຽງອາຫານ |
| AFSIS | ລະບົບຂໍ້ມູນຂ່າວສານການຄ້ຳປະກັນສະບຽງອາຫານຂອງອາຊຽນ |
| AFSRB | ຄະນະກຳມະການຄັງແຮອາຫານຂອງອາຊຽນ |
| AIFS | ແຜນຮ່ວມມືຮອບດ້ານການຄ້ຳປະກັນສະບຽງອາຫານອາຊຽນ |
| AMAF | ລັດຖະມົນຕີກະສິກຳ ແລະ ປ່າໄມ້ອາຊຽນ |
| AMS | ປະເທດສະມາຊິກອາຊຽນ |
| APTCS-FSBD | ຍຸດທະສາດພັດທະນາພະລັງງານຊີວະພາບ ແລະ ການຄ້ຳປະກັນສະບຽງອາຫານອາຊຽນ + 3 |
| APTERR | ຄັງແຮເຂົ້າສຸກເສີນ ອາຊຽນ + 3 |
| ASC | ສະພາເມັດພັນອາຊຽນ |
| ASEAN-CCI | ສະພາອຸດສາຫະກຳ ແລະ ການຄ້າອາຊຽນ |
| ASEC | ກອງເລຂາອາຊຽນ |
| AsiaDHRRA | ຄູ່ຮ່ວມພັດທະນາຊັບພະຍາກອນມະນຸດໃນຊົນນະບົດອາຊີ |

| | |
|---|---|
| ASWGAC/ ASWGAC | ສູນພັດທະນາສະຫະກອນອາຊຽນ/ ຂະແໜງການອາຊຽນດ້ານສະຫະກອນ |
| ASWGC | ຂະແໜງການອາຊຽນດ້ານພືດ |
| ASWGFi | ຂະແໜງການອາຊຽນດ້ານການປະມົງ |
| ASWGL | ຂະແໜງການອາຊຽນດ້ານລ້ຽງສັດ |
| ATIGA | ຂໍ້ຕົກລົງອາຊຽນດ້ານການຄ້າ ກ່ຽວກັບ ສິນຄ້າອຸປະໂພກ |
| ATWGARD | ຄະນະວິຊາການອາຊຽນ ດ້ານການຄົ້ນຄວ້າ ແລະ ການພັດທະນາ |
| FAO | ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ |
| IARC | ສູນຄົ້ນຄວ້າກະສິກຳນາໆຊາດ |
| IFPRI | ສະຖາບັນຄົ້ນຄວ້ານະໂຍບາຍອາຫານນາໆຊາດ |
| IRRI | ສະຖາບັນຄົ້ນຄວ້າເຂົ້ານາໆຊາດ |
| NARS | ລະບົບຄົ້ນຄວ້າທົດລອງກະສິກຳແຫ່ງຊາດ |
| PPP | ການມີສ່ວນຮ່ວມລະຫວ່າງລັດ-ເອກະຊົນ |
| SEOM | ກອງປະຊຸມເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດ |
| SOMHD | ກອງປະຊຸມເຈົ້າໜ້າທີ່ອາວຸໂສ ຂອງລັດຖະມົນຕີສາທາລະນາສຸກອາຊຽນ |
| SOM-AMAF | ກອງປະຊຸມເຈົ້າໜ້າທີ່ອາວຸໂສ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຂອງອາຊຽນ |
| SPA-FS | ແຜນຍຸດທະສາດຈັດຕັ້ງປະຕິບັດການຄ້ຳປະກັນສະບຽງອາຫານອາຊຽນ |
| SRI | ລະບົບການປູກເຂົ້າແບບກະເສດສຸມ |
| TWG | ຄະນະວິຊາການ |

**ເອກະສານຊ້ອນທ້າຍ** ANNEX 1: **ລາຍລະອຽດຂອງແຜນຍຸດທະສາດຈັດຕັ້ງປະຕິບັດແຜນຄໍ້າປະກັນສະບຽງອາຫານ** SPA-FS 2015-2020

| ຍຸດທະສາດ/ ໝາກຜົນ | ກິດຈະກໍາ | ຜົນໄດ້ຮັບ | ໄລຍະເວລາ (ລວມທັງວຽກ ກະກຽມ) | ອົງກອນຮັບຜິດຊອບຫຼັກ; ອົງກອນຮັບຜິດຊອບອື່ນໆ, ຄູ່ຮ່ວມສົນທະນາ/ພັດທະນາ |
|---|---|---|---|---|
| **ຍຸດທະສາດ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ ການຄໍ້າປະກັນສະບຽງອາຫານ ລວມທັງມາດຕະການກະກຽມການບັນເທົາທຸກ ໃນໄລຍະສັ້ນ/ສຸກເສີນ** | | | | |
| **ໝາກຜົນ 1.1 ຄັງແຮສະບຽງອາຫານຂອງພາກພື້ນໄດ້ດໍາເນີນການເປັນລະບົບ** | | | 2015-2020 | - ປະເທດສະມາຊິກອາຊຽນ<br>- ປະເທດສະມາຊິກ ຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາອາຊຽນ<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະສິກໍາ ແຫ່ງສະຫະປະຊາຊາດ |
| | <u>ກິດຈະກໍາ 1.1.1.</u> ຈັດກອງປະຊຸມວິຊາການ ກ່ຽວກັບ ການຈັດຕັ້ງປະຕິບັດ APTERR ຢູ່ແຕ່ລະປະເທດ, ກວມເອົາການສ້າງຕັ້ງລະບົບການລະບາຍ ຄັງແຮອາຫານ. | - ເອກະສານ/ບົດບັນທຶກກອງປະຊຸມຄະນະວິຊາການ;<br>- ບົດບາດ ແລະ ການມີສ່ວນຮ່ວມຂອງພາກເອກະຊົນ ໃນການກໍານົດຄັງແຮເຂົ້າສຸກເສີນ;<br>- ມາດຕະການຫຼຸດຜ່ອນຄ່າໃຊ້ຈ່າຍໃນສາງເກັບມ້ຽນ ແລະ ສາງເກັບຄັງແຮເຂົ້າ;<br>- ມາດຕະການຮ່ວມືດ້ານອື່ນໆລະຫວ່າງໜ່ວຍງານ ຄໍ້າປະກັນສະບຽງອາຫານລະດັບຊາດ ແລະ ຄັງແຮເຂົ້າອາຊຽນ+3, ແລກປ່ຽນຂໍ້ມູນກ່ຽວກັບຄັງ ແຮເຂົ້າ ສຸກເສີນ , ກະກຽມບ່ອນເກັບຮັກສາໄວ້ລ່ວງໜ້າ, ແລະອື່ນໆ.<br>- ຮ່າງຄູ່ມືປັບປຸງລະບຽບແລະຂະບວນການລະບາຍ ແລະ ສະສົມ ຄັງແຮເຂົ້າ. | 2015-2017 | - ປະເທດສະມາຊິກອາຊຽນ<br>- ປະເທດສະມາຊິກ ຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາອາຊຽນ<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະເສດ ແຫ່ງສະຫະປະຊາຊາດ |
| | <u>ກິດຈະກໍາ 1.1.2.</u> ລວບລວມຂໍ້ມູນ ແລະ ເຮັດການວິເຄາະ ເພື່ອກະກຽມບົດລາຍງານ ໃຫ້ແກ່ກອງປະຊຸມວິຊາ | - ສຶກສາເບິ່ງບາງບັນຫາທີ່ໄດ້ປຶກສາຫາລືກັນໃນລະຫວ່າງກອງປະຊຸມວິຊາການ, ເຊັ່ນ ຂະໜາດຄັງແຮເຂົ້າ ທີ່ເໝາະສົມ ໃນລະດັບຊາດແລະພາກພື້ນ, ແລະອື່ນໆ. | 2015-2017 | - ປະເທດສະມາຊິກອາຊຽນ<br>- ປະເທດສະມາຊິກ ຄັງແຮເຂົ້າສຸກເສີນອາຊຽນ +3 |

| | | | | |
|---|---|---|---|---|
| | | - ອຸປະກອນທີ່ນຳໃຊ້ໃນການສະເໜີ ເຊັ່ນ: ຂໍ້ສະແນະນຳວິຊາການ ໃຫ້ແກ່ ກອງປະຊຸມຄະນະວິຊາການ ແລະ ເວທີປຶກສາຫາລືດ້ານນະໂຍບາຍຕ່າງໆ | | - ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາອາຊຽນ<br>- ທະນາຄານພັດທະນາອາຊີ , ອົງການອາຫານ ແລະ ກະເສດແຫ່ງສະຫະປະຊາຊາດ |
| | <u>ກິດຈະກຳ 1.1.3</u>. ສະພາ APTERR ໃຫ້ການຊ່ວຍເຫຼືອ ແກ່ປະເທດສະມາຊິກ APTERR ເພື່ອສ້າງຕັ້ງກົນໄກຈັດຕັ້ງປະຕິບັດ ຢູ່ແຕ່ລະປະເທດ ພ້ອມທັງລະບົບການຕິດຕາມປະເມີນຜົນ. | - ຄູ່ມືການປະຕິບັດງານ, ຂະບວນການຜະລິດແຜນພັບເລື່ອນ (flowcharts). | 2015-2017 | - ປະເທດສະມາຊິກອາຊຽນ<br>- ປະເທດສະມາຊິກ ຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາອາຊຽນ<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະເສດແຫ່ງສະຫະປະຊາຊາດ |
| | <u>ກິດຈະກຳ 1.1.4.</u> ຈັດກິດຈະກຳສ້າງຂີດຄວາມສາມາດ (ເຊັ່ນ: ການຝຶກອົບຮົມ) ສຳລັບສະມາຊິກ APTERR ແລະ ກອງເລຂາ. | - ການອອກແບບຝຶກອົບຮົມ, ລາຍຊື່ນັກສຳມະນາກອນ, ແລະ ບົດລາຍງານຝຶກອົບຮົມ | 2015-2020 | - ປະເທດສະມາຊິກອາຊຽນ<br>- ປະເທດສະມາຊິກຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ +3<br>- ກອງເລຂາອາຊຽນ<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະເສດແຫ່ງສະຫະປະຊາຊາດ |
| | <u>ກິດຈະກຳ 1.1.5</u> ຮ່ວມມືກັບ ກອງເລຂາ AFSIS ແລະ ໜ່ວຍງານຮັບຜິດຊອບອາຫານລະດັບຊາດ ເພື່ອສະໜອງຂໍ້ມູນການຕິດຕາມປະເມີນຜົນຂອງອາຫານສຸກເສີນເປັນໄລຍະ (FEMI). | - ລະບົບເຕືອນໄພ ສະພາບການໄພພິບັດ<br>- ການປະເມີນຜົນ ສະພາບການໄພພິບັດ FEMI ປະຈຳໄຕມາດ<br>- ການລາຍງານສະພາບການໄພພິບັດ FEMI ປະຈຳປີ | 2015-2020 | - ປະເທດສະມາຊິກຄັງແຮເຂົ້າສຸກເສີນອາຊຽນ + 3<br>- ກອງເລຂາຄັງແຮເຂົ້າສຸກເສີນອາຊຽນ + 3<br>- ກອງເລຂາ ລະບົບຂໍ້ມູນຂ່າວສານການຄໍ້າປະກັນສະບຽງອາຫານຂອງ |

| | | | | |
|---|---|---|---|---|
| | | | | ອາຊຽນ<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະເສດ ແຫ່ງສະຫະປະຊາຊາດ<br>- ອື່ນໆຈະມີການຖືກກຳນົດ. |
| | <u>ກິດຈະກຳ 1.1.6.</u> ເຮັດການສຶກສາຄວາມເປັນໄປໄດ້ ໃນການຂະຫຍາຍຂອບເຂດ ຂອງຜະລິດຕະພັນອາຫານ ແລະ ການກຳນົດກົນໄກທີ່ເໝາະສົມ. | - ບົດລາຍງານເລີ່ມຕົ້ນ ທີ່ກວມເອົາວິທີການ ແລະ ແຜນການສຶກສາ<br>- ບົດລາຍງານກາງສະໄໝ ທີ່ກວມເອົາໝົດທຸກພາກ ຕາມກອບທີ່ໄດ້ຕົກລົງກັນ ແລະ ຜົນໄດ້ຮັບເບື້ອງຕົ້ນ ຂອງການສຶກສາ<br>- ຮ່າງບົດລາຍງານສຸດທ້າຍ ທີ່ກວມເອົາຜົນໄດ້ຮັບຂອງການສຶກສາ<br>- ບົດລາຍງານສຸດທ້າຍ – ສັງລວມຂໍ້ສະເໜີແນະ, ດັດແກ້ ແລະ ໃຫ້ຂໍ້ສະເໜີແນະ | 2015- 2016 | - ປະເທດສະມາຊິກອາຊຽນ<br>- ສະພາຄັງແຮເຂົ້າສຸກເສີນອາຊຽນ+3<br>- ກອງເລຂາຄັງແຮເຂົ້າສຸກເສີນ ອາຊຽນ + 3<br>- ທະນາຄານພັດທະນາອາຊີ, ອົງການອາຫານ ແລະ ກະເສດ ແຫ່ງສະຫະປະຊາຊາດ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ |
